ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ: 1137 /PCD
ນະຄອນຫຼວງວຽງຈັນ: ວັນທີ: 27 FEB 2019

ມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ I/2019

ກອງປະຊຸມສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄັ້ງທີ I ໄດ້ຈັດຂຶ້ນໃນວັນທີ 27 ກຸມພາ 2019 ເວລາ 10:00 ໂມງ ທີ່ໂຮງແຮມຄອນຕິເນັນໂທ ພລາຊາ, ຊັ້ນ 3, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ ນະຄອນຫລວງວຽງຈັນ, ສປປ ລາວ, ໃຫ້ກຽດເປັນປະທານໂດຍ ທ່ານ ຂັນທະວົງ ດາລາວົງ, ຮອງປະທານສະພາບໍລິຫານ.

ເນື້ອໃນຫຼັກຂອງກອງປະຊຸມໄດ້ປຶກສາຫາລືຮ່ວມກັນ ແລະ ມີມະຕິເປັນເອກະພາບກັນ ດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ຈະຈັດຂຶ້ນພາຍໃນເດືອນພຶດສະພາ 2019, ສ່ວນວັນທີແນ່ນອນແມ່ນມອບສິດໃຫ້ ທ່ານອຳນວຍການເປັນຜູ້ກຳນົດເອງ ຕາມພາຍຫຼັງ;
2. ພາບລວມ ບົດລາຍງານການເງິນ ປະຈຳປີ 2018;
3. ກະກຽມ ແຜນປັບປຸງລະບົບບັນຊີ ແລະ ປຶ້ມຄູ່ມືການບັນຊີ ໃຫ້ກ້າວເຂົ້າສູ່ລະບົບ IFRS ເທື່ອລະກ້າວ;
4. ກົນລະຍຸດໃໝ່ ທາງດ້ານການຕະຫຼາດ ໄລຍະສັ້ນ ແລະ ໄລຍະຍາວ ຂອງບໍລິສັດ.

ໃນທີ່ກອງປະຊຸມບໍ່ມີຫຍັງເພີ່ມ, ທ່ານຮອງປະທານກ່າວປິດກອງປະຊຸມ ໃນເວລາ 12:00 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນ.

ຮອງປະທານສະພາບໍລິຫານ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນຕິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ໂທລະສັບ/ໂທລະສານ: +856 21 265394.; E-mail: info@pcdlao.com; website: www.pcdlao.com